ຄະນະກຳມະການຄຸ້ມຄອງຫຼັກຊັບ
Lao Securities Commission

# Annual Report
# ບົດລາຍງານປະຈຳປີ
# 2016

# ບົດລາຍງານປະຈຳປີ 2016

ວິໄສທັດ: “ເປັນຂໍກະແຈ ໃນການຈັດສັນແຫຼ່ງທຶນ ທີ່ມີຄວາມໜ້າເຊື່ອຖື ແລະ ມີມາດຕະຖານສາກົນ”

# ສາລະບານ

**ເນື້ອໃນ** **ໜ້າ**


**ພາກສະເໜີ ........ 1**

**I. ອົງການຄຸ້ມຄອງວຽກງານຫຼັກຊັບ ........ 2**

**II. ການພັດທະນາວຽກງານຫຼັກຊັບໃນປີ 2016 ........ 5**

1. ດ້ານນິຕິກຳ ........ 5
2. ຜະລິດຕະພັນຫຼັກຊັບ ແລະ ການສະໜອງທຶນເຂົ້າໃນການພັດທະນາເສດຖະກິດ ........ 5
3. ສະພາບການຊື້-ຂາຍໃນຕະຫຼາດຂັ້ນສອງ ........ 6
4. ສະຖາບັນສື່ກາງດ້ານຫຼັກຊັບ ........ 9
5. ການໂຄສະນາເຜີຍແຜ່ ........ 9
6. ການພົວພັນຮ່ວມມືສາກົນ ........ 11

**III. ທິດທາງແຜນການ ປີ 2017 ........ 11**

# ສາລະບານແຜນວາດ


ແຜນວາດ 1: ໂຄງຮ່າງການຈັດຕັ້ງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ........................................... 3

ແຜນວາດ 2: ໂຄງຮ່າງການຈັດຕັ້ງຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ................................ 4

ແຜນວາດ 3: ຈຳນວນບັນຊີຊື້-ຂາຍຫຼັກຊັບຂອງຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ ປະຈຳປີ 2016 ............. 7

ແຜນວາດ 4: ເປີເຊັນມູນຄ່າການຊື້-ຂາຍຂອງຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ ປີ 2012-2016 ............... 7

ແຜນວາດ 5: ດັດຊະນີຕະຫຼາດຫຼັກຊັບລາວ ແຕ່ປີ 2011-2016 ....................................................... 8

ແຜນວາດ 6: ມູນຄ່າການຊື້-ຂາຍ ແລະ ປະລິມານການຊື້-ຂາຍ .......................................................... 8

ແຜນວາດ 7: ມູນຄ່າຕະຫຼາດ ແຕ່ປີ 2011-2016 ........................................................................ 9

# ສາລະບານຕາຕະລາງ

ຕາຕະລາງ 1: ນິຕິກຳທີ່ໄດ້ປັບປຸງ ແລະ ສ້າງໃໝ່ ໃນປີ 2016 ............................................................ 5

ຕາຕະລາງ 2: ສະຖິຕິກ່ຽວກັບການອອກຈຳໜ່າຍຫຼັກຊັບ ແຕ່ປີ 2010-2016 ......................................... 6

ຕາຕະລາງ 3: ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ ......................................................... 8

# ພາກສະເໜີ

ທຶນ ແມ່ນປັດໄຈທີ່ມີຄວາມສຳຄັນຕໍ່ການພັດທະນາ ແລະ ການຂະຫຍາຍຕົວຂອງເສດຖະກິດຂອງປະເທດ ຊຶ່ງນອກຈາກຕະຫຼາດເງິນ (ທະນາຄານ) ແລ້ວ, ຍັງມີຕະຫຼາດທຶນ ທີ່ເປັນແຫຼ່ງລະດົມທຶນ ສຳລັບຜູ້ທີ່ຕ້ອງການເງິນທຶນເຂົ້າໃນການຂະຫຍາຍທຸລະກິດ ແລະ ເປັນບ່ອນລົງທຶນ ສຳລັບຜູ້ທີ່ມີເງິນທຶນເຫຼືອ. ອີງໃສ່ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII ໄດ້ກຳນົດນະໂຍບາຍການພັດທະນາ ແລະ ການສະໜອງທຶນ ຕ້ອງມີຄວາມສອດຄ່ອງ, ກົມກຽວ ແລະ ຕິດພັນກັນຕັ້ງແຕ່ຫົວທີຄື ການສະໜອງທຶນຕ້ອງສອດຄ່ອງກັບນະໂຍບາຍລວມຂອງການພັດທະນາປະເທດ ເປັນຕົ້ນ ສຸມໃສ່ການບັນລຸຕາມຄາດໝາຍການຫຼຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາ. ເພື່ອບັນລຸໄດ້ຄາດໝາຍດັ່ງກ່າວ ແມ່ນມີຄວາມຈຳເປັນຕ້ອງມີການສະໜອງແຫຼ່ງທຶນຈຳນວນຫຼາຍຈາກຫຼາຍແຫຼ່ງທຶນ ລວມມີ ການລົງທຶນໂດຍກົງຈາກພາກເອກະຊົນທັງພາຍໃນ ແລະ ຕ່າງປະເທດ, ການລົງທຶນຂອງລັດຖະບານ, ການສະໜອງສິນເຊື່ອຈາກລະບົບທະນາຄານ ແລະ ***ການລະດົມທຶນຜ່ານຕະຫຼາດທຶນ***. ສະນັ້ນ ລັດຖະບານຈຶ່ງໄດ້ໃຫ້ຄວາມສຳຄັນໃນການພັດທະນາຕະຫຼາດທຶນ ຊຶ່ງນັບແຕ່ປີ 2010 ຮອດປີ 2016 ເຫັນວ່າ ຕະຫຼາດທຶນຢູ່ ສປປ ລາວ ໄດ້ມີການພັດທະນາ ແລະ ຂະຫຍາຍຕົວໃນທ່ວງທ່າທີ່ດີຂຶ້ນເທື່ອລະກ້າວ.

ເວົ້າສະເພາະ ການພັດທະນາຕະຫຼາດທຶນລາວໃນປີ 2016 ເຫັນວ່າ ມີການຂະຫຍາຍຕົວ ເມື່ອທຽບໃສ່ປີ 2015 ຊຶ່ງເຫັນໄດ້ຈາກການສ້າງສິ່ງອຳນວຍຄວາມສະດວກຕ່າງໆ ເພື່ອຊຸກຍູ້ການປະກອບສ່ວນຂອງຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ສະແດງອອກຄື ນິຕິກຳຈຳນວນໜຶ່ງໄດ້ຮັບການປັບປຸງ ແລະ ສ້າງຂຶ້ນໃໝ່, ສ້າງຊ່ອງທາງການລະດົມທຶນຈາກຕ່າງປະເທດ ດ້ວຍຮູບການອອກຈຳໜ່າຍຮຸ້ນກູ້, ກົນໄກການຊື້-ຂາຍໄດ້ຮັບການປັບປຸງ, ຖານຜູ້ລົງທຶນມີຈຳນວນເພີ່ມຂຶ້ນ, ສະຖາບັນສື່ກາງທາງດ້ານຫຼັກຊັບຫຼາກຫຼາຍຂຶ້ນ, ການເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບຕະຫຼາດທຶນ ມີຄວາມຫຼາກຫຼາຍ ແລະ ກວ້າງຂວາງຂຶ້ນ. ພ້ອມນັ້ນ ຄະນະກຳມະການຄຸ້ມຄອງຫຼັກຊັບ ກໍ່ໄດ້ມີການເປີດກວ້າງການຮ່ວມມື ແລະ ເຊື່ອມໂຍງກັບພາກພື້ນ ແລະ ສາກົນ ທັງເພີ່ມບົດບາດຂອງຕົນໃນເວທີສາກົນ ດ້ວຍການເປັນເຈົ້າພາບກອງປະຊຸມສຳມະນາລະດັບສາກົນ ແລະ ເປັນປະທານຮ່ວມໃນໜ່ວຍງານພັດທະນາຕະຫຼາດທຶນອາຊຽນ.

ບົດລາຍງານປະຈຳປີ 2016 ສະບັບນີ້ ຈະສ່ອງແສງໃຫ້ເຫັນພາບລວມໃນການຄຸ້ມຄອງ ແລະ ພັດທະນາຕະຫຼາດທຶນຢູ່ ສປປ ລາວ ໃນປີ 2016 ແລະ ທິດທາງການເຄື່ອນໄຫວວຽກງານຕະຫຼາດທຶນ ປີ 2017 ໂດຍສັງເຂບ ຊຶ່ງໃນປີ 2017 ພວກເຮົາຈະໄດ້ສືບຕໍ່ເອົາໃຈໃສ່ຈັດຕັ້ງຜັນຂະຫຍາຍບັນດາແຜນງານ-ໂຄງການ ທີ່ໄດ້ກຳນົດໄວ້ໃນແຜນຍຸດທະສາດພັດທະນາຕະຫຼາດທຶນ ແນໃສ່ເຮັດໃຫ້ຕະຫຼາດທຶນ ມີບາດກ້າວຂະຫຍາຍຕົວ ປະກອບສ່ວນຊຸກຍູ້ການພັດທະນາເສດຖະກິດ-ສັງຄົມ.

## I. ອົງການຄຸ້ມຄອງວຽກງານຫຼັກຊັບ

### ❖ ຄະນະກຳມະການຄຸ້ມຄອງຫຼັກຊັບ

ຄະນະກຳມະການຄຸ້ມຄອງຫຼັກຊັບ ຂຽນຫຍໍ້ດ້ວຍຕົວອັກສອນວ່າ: "ຄຄຊ" ມີຊື່ເປັນພາສາອັງກິດ ແມ່ນ Lao Securities Commission ຂຽນຫຍໍ້ດ້ວຍຕົວອັກສອນວ່າ: "LSC" ແມ່ນອົງການຈັດຕັ້ງຂອງລັດຖະບານ. ມີພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະບານ ໃນການຄຸ້ມຄອງມະຫາພາກ ທາງດ້ານວຽກງານຫຼັກຊັບຢ່າງລວມສູນໃນຂອບເຂດທົ່ວປະເທດ, ມີຄວາມຮັບຜິດຊອບໂດຍກົງໃນການຄຸ້ມຄອງ, ຕິດຕາມ ແລະ ກວດກາວຽກງານຫຼັກຊັບ ບົນພື້ນຖານການປະສານສົມທົບກັບຂະແໜງການ ແລະ ທ້ອງຖິ່ນ ທີ່ກ່ຽວຂ້ອງເມື່ອມີຄວາມຈຳເປັນ ໂດຍມີສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຫຼື "ສຄຄຊ" ເປັນກົງຈັກຊ່ວຍວຽກ.

ໂຄງປະກອບຂອງ ຄຄຊ ປະກອບມີ 13 ທ່ານ ຄື: ປະທານ 1 ທ່ານ, ຮອງປະທານ 1 ທ່ານ, ກຳມະການ 10 ທ່ານ ແລະ ເລຂາ ຄຄຊ 1 ທ່ານ (ແຜນວາດ 1).

ຄຄຊ ເປີດກອງປະຊຸມສາມັນຂອງຕົນຂຶ້ນ ສາມເດືອນຕໍ່ຄັ້ງ. ນອກນັ້ນ ຍັງສາມາດເປີດກອງປະຊຸມວິສາມັນຂຶ້ນເວລາໃດກໍ່ໄດ້ ຖ້າວ່າມີຄວາມຈຳເປັນຕາມການຮຽກຂອງປະທານ ຄຄຊ ຫຼື ຕາມການສະເໜີຂອງກຳມະການຫຼາຍກວ່າເຄິ່ງໜຶ່ງ. ກອງປະຊຸມ ຄຄຊ ຈະເປີດຂຶ້ນໄດ້ກໍ່ຕໍ່ເມື່ອມີສະມາຊິກເຂົ້າຮ່ວມຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກທັງໝົດ.

ປີ 2016 ໄດ້ມີການແຕ່ງຕັ້ງປະທານ ຄຄຊ ຄົນໃໝ່ ເພື່ອໃຫ້ສອດຄ່ອງກັບການປັບປຸງກົງຈັກຂອງລັດຖະບານຊຸດໃໝ່ ແລະ ເປີດກອງປະຊຸມ ຄຄຊ ຂຶ້ນ ຈຳນວນ 3 ຄັ້ງ ເພື່ອພິຈາລະນາບັນຫາສຳຄັນຕ່າງໆ ເປັນຕົ້ນແມ່ນແຜນການເຄື່ອນໄຫວວຽກງານຕະຫຼາດທຶນ ໃນຕໍ່ໜ້າຂອງ ສຄຄຊ, ແຜນການແກ້ໄຂສະພາບຄ່ອງຂອງຕະຫຼາດຫຼັກຊັບລາວ, ນິຕິກຳຂອງ ຄຄຊ ແລະ ອື່ນໆ.

# ແຜນວາດ 1: ໂຄງຮ່າງການຈັດຕັ້ງຂອງຄະນະກໍາມະການຄຸ້ມຄອງຫຼັກຊັບ



ທ່ານ ສົມດີ ດວງດີ,
ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ
ກະຊວງການເງິນ, ປະທານ ຄຄຊ



ທ່ານ ປອ. ສົມພາວ ໄຟສິດ,
ຜູ້ວ່າ ການທະນາຄານແຫ່ງ ສປປ ລາວ,
ຮອງປະທານ ຄຄຊ, ຜູ້ປະຈໍາການ



ທ່ານ ປອ. ອາດສະພັງທອງ ສີພັນດອນ,
ຮອງລັດຖະມົນຕີ ກະຊວງການເງິນ,
ກໍາມະການ ຄຄຊ



ທ່ານ ສົມຈິດ ອິນທະມິດ,
ຮອງລັດຖະມົນຕີ ກະຊວງອຸດສາຫະ
ກໍາ ແລະ ການຄ້າ, ກໍາມະການ ຄຄຊ



ທ່ານ ປອ. ຄໍາລຽນ ພົນເສນາ,
ຮອງລັດຖະມົນຕີ ກະຊວງ ແຜນການ
ແລະ ການລົງທຶນ, ກໍາມະການ ຄຄຊ



ທ່ານ ບຸນສະຫວາດ ບຸບຜາ,
ຮອງລັດຖະມົນຕີ ກະຊວງຍຸຕິທໍາ,
ກໍາມະການ ຄຄຊ



ທ່ານ ຄໍາມູນ ວິພົງໄຊ,
ຮອງລັດຖະມົນຕີ ກະຊວງພາຍໃນ,
ກໍາມະການ ຄຄຊ



ທ່ານ ນາງ ວັດທະນາ ດາລາລອຍ,
ຮອງຜູ້ວ່າການທະນາຄານແຫ່ງ
ສປປ ລາວ, ກໍາມະການ ຄຄຊ



ທ່ານ ທັນຕາ ກອງພາລີ,
ຮອງກໍາມະທິການແຜນການ, ການເງິນ
ແລະ ການກວດສອບ, ສະພາແຫ່ງ
ຊາດ, ກໍາມະການ ຄຄຊ



ທ່ານ ມະນີໄສ ຊາມຸນຕີ,
ຮອງປະທານກໍາມາທິການ ເສດຖະ
ກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ
ສະພາແຫ່ງຊາດ, ກໍາມະການ ຄຄຊ



ທ່ານ ໄຊຊະນະ ໂຄດພູທອນ,
ຮອງຫົວໜ້າອົງການໄອຍະການປະຊາ
ຊົນ ສູງສຸດ, ກໍາມະການ ຄຄຊ



ທ່ານ ນາງ ບຸບຜາ ເຄນວົງດາລາ,
ຮອງຫົວໜ້າ ຫ້ອງວ່າການສໍານັກງານ
ນາຍົກລັດຖະມົນຕີ, ກໍາມະການ ຄຄຊ



ທ່ານ ນາງ ສາຍສະໝອນ ຈັນທະຈັກ,
ຫົວໜ້າສໍານັກງານ ຄຄຊ, ເລຂາ ຄຄຊ

❖ **ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຂຽນຫຍໍ້ດ້ວຍຕົວອັກສອນວ່າ: "ສຄຄຊ" ແລະ ມີຊື່ເປັນພາສາອັງກິດວ່າ: "Lao Securities Commission Office" ຊຶ່ງຂຽນຫຍໍ້ດ້ວຍຕົວອັກສອນວ່າ: "LSCO" ຢູ່ພາຍໃຕ້ການຊີ້ນຳ-ນຳພາໂດຍກົງທາງດ້ານວິຊາສະເພາະ ຈາກຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ໄດ້ຮັບງົບປະມານຈາກທະນາຄານແຫ່ງ ສປປ ລາວ. ມີພາລະບົດບາດເປັນກົງຈັກຊ່ວຍວຽກໃຫ້ແກ່ ຄະນະກຳມະການຄຸ້ມຄອງຫຼັກຊັບ ໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຫຼັກຊັບ ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານດັ່ງກ່າວ ມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ, ສອດຄ່ອງຕາມແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງລັດຖະບານໃນແຕ່ລະໄລຍະ.

ປີ 2016 ສຄຄຊ ປະກອບມີພະນັກງານທັງໝົດ 47 ຄົນ (ຍິງ 20 ຄົນ) ໃນນັ້ນ ມີຄະນະສຳນັກງານ ຄຄຊ 3 ຄົນ (ຍິງ 2 ຄົນ), ຄະນະພະແນກ 12 ຄົນ (ຍິງ 5 ຄົນ), ພະນັກງານວິຊາການ 32 ຄົນ (ຍິງ 13 ຄົນ). ມີລະດັບການສຶກສາປະລິນຍາເອກ 1 ຄົນ, ປະລິນຍາໂທ 23 ຄົນ (ຍິງ 13 ຄົນ), ປະລິນຍາຕີ 22 ຄົນ (ຍິງ 7 ຄົນ) ແລະ ຊັ້ນກາງ 1 ຄົນ.

ສຄຄຊ ປະກອບດ້ວຍ 6 ພະແນກ ຄື: ພະແນກຈັດຕັ້ງ ແລະ ບໍລິຫານ, ພະແນກຄຸ້ມຄອງການອອກຈຳໜ່າຍຫຼັກຊັບ, ພະແນກຄຸ້ມຄອງສະຖາບັນສີ່ກາງດ້ານຫຼັກຊັບ, ພະແນກນິຕິກຳ, ພະແນກຝຶກອົບຮົມ ແລະ ໂຄສະນາເຜີຍແຜ່ ແລະ ພະແນກຄຸ້ມຄອງຕະຫຼາດຫຼັກຊັບ (ແຜນວາດ 2).

**ແຜນວາດ 2: ໂຄງຮ່າງການຈັດຕັ້ງຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ**



## II. ການພັດທະນາວຽກງານຫຼັກຊັບໃນປີ 2016

### 1. ດ້ານນິຕິກຳ.

ຄຄຊ ໄດ້ຖືເອົາແຜນພັດທະນາເສດຖະກິດ-ສັງຄົມ 5ປີ ຄັ້ງທີ VIII ແລະ ແຜນຍຸດທະສາດພັດທະນາຕະຫຼາດທຶນ ແຕ່ປີ 2016-2025 ເປັນບ່ອນອີງໃນການພັດທະນາເຄື່ອງມືໃນການຄຸ້ມຄອງຕະຫຼາດທຶນ ໂດຍສະເພາະ ແມ່ນການປັບປຸງບັນດານະໂຍບາຍ ແລະ ນິຕິກຳຕ່າງໆ ໃຫ້ເປັນລະບົບຄົບຊຸດ ເພື່ອຮັບໃຊ້ຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ແລະ ສັງຄົມ ດ້ວຍການປັບປຸງ ແລະ ສ້າງລະບຽບການຕ່າງໆ ໃຫ້ຈະແຈ້ງ ຮັດກຸມ ເຂັ້ມງວດ ມີຄວາມສັກສິດ ແລະ ສາມາດຈັດຕັ້ງປະຕິບັດໄດ້ ທັງມີຄວາມແທດເໝາະ ແລະ ສອດຄ່ອງກັບສະພາບເງື່ອນໄຂ ຂອງ ສປປ ລາວ ແລະ ໃຫ້ສາມາດເຊື່ອມໂຍງກັບສາກົນ. ນິຕິກຳ ທີ່ໄດ້ປັບປຸງ ແມ່ນແນໃສ່ເຮັດໃຫ້ການຄຸ້ມຄອງ ແລະ ການດຳເນີນງານຂອງຜູ້ມີສ່ວນຮ່ວມໃນຕະຫຼາດທຶນມີຄວາມຄ່ອງຕົວ ເປັນຕົ້ນແມ່ນ ການລາຍງານຂອງຕະຫຼາດຫຼັກຊັບລາວ, ຄວາມພຽງພໍຂອງທຶນຂອງບໍລິສັດຫຼັກຊັບ ແລະ ການໂອນຮຸ້ນ. ສຳລັບນິຕິກຳ ທີ່ສ້າງໃໝ່ ແມ່ນເນັ້ນໃສ່ການຕິດຕາມກວດກາແຫຼ່ງທຶນຂອງບໍລິສັດຫຼັກຊັບ, ປະສິດທິພາບໃນການດຳເນີນທຸລະກິດຂອງບໍລິສັດຈົດທະບຽນ, ການປົກປ້ອງຜົນປະໂຫຍດຂອງຜູ້ລົງທຶນ ແລະ ກົນໄກການລະດົມທຶນຢູ່ຕ່າງປະເທດ ໂດຍຜ່ານການອອກຈຳໜ່າຍຮຸ້ນກູ້. ປະຈຸບັນ ສຄຄຊ ໄດ້ປະກາດນຳໃຊ້ນິຕິກຳທັງໝົດ ຈຳນວນ 40 ສະບັບ(ເອກະສານຊ້ອນທ້າຍ 1). ສະເພາະປີ 2016 ແມ່ນມີການສ້າງ ແລະ ປັບປຸງນິຕິກຳ ຈຳນວນທັງໝົດ 7 ສະບັບ, ໃນນັ້ນ ສ້າງໃໝ່ຈຳນວນ 4 ສະບັບ ແລະ ປັບປຸງຈຳນວນ 3 ສະບັບ.

**ຕາຕະລາງ 1: ນິຕິກຳທີ່ໄດ້ປັບປຸງ ແລະ ສ້າງໃໝ່ ໃນປີ 2016**

| ລຳດັບ | ເນື້ອໃນ | ການສ້າງ/ປັບປຸງ |
|---|---|---|
| 1 | ລະບຽບວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນ ສຳລັບຕະຫຼາດຫຼັກຊັບ | ປັບປຸງ |
| 2 | ລະບຽບວ່າດ້ວຍຄວາມພຽງພໍຂອງທຶນຂອງບໍລິສັດຫຼັກຊັບ | ປັບປຸງ |
| 3 | ຂໍ້ຕົກລົງວ່າດ້ວຍການໂອນຮຸ້ນ | ປັບປຸງ |
| 4 | ລະບຽບວ່າດ້ວຍການລາຍງານເພີ່ມເຕີມກ່ຽວກັບ ແຫຼ່ງທີ່ມາຂອງທຶນ, ໂຄງສ້າງຜູ້ຖືຮຸ້ນ ແລະ ຜູ້ໄດ້ຮັບຜົນປະໂຫຍດສຸດທ້າຍຂອງບໍລິສັດຫຼັກຊັບ | ໃໝ່ |
| 5 | ຂໍ້ຕົກລົງວ່າດ້ວຍສະພາບໍລິຫານຂອງບໍລິສັດຈົດທະບຽນ | ໃໝ່ |
| 6 | ຂໍ້ຕົກລົງວ່າດ້ວຍການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ | ໃໝ່ |
| 7 | ຂໍ້ຕົກລົງວ່າດ້ວຍລາຍການທີ່ກ່ຽວພັນ | ໃໝ່ |

### 2. ຜະລິດຕະພັນຫຼັກຊັບ ແລະ ການສະໜອງທຶນເຂົ້າໃນການພັດທະນາເສດຖະກິດ

ປີ 2016 ເປັນປີທຳອິດ ທີ່ ຄຄຊ ໄດ້ອະນຸຍາດໃຫ້ບໍລິສັດຈົດທະບຽນລະດົມທຶນ ດ້ວຍການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ເປັນສະກຸນໂດລາສະຫະລັດ ກຳນົດເວລາ 7 ປີ, 10 ປີ ແລະ 12 ປີ ຊຶ່ງເຮັດໃຫ້ບໍລິສັດດັ່ງກ່າວສາມາດລະດົມທຶນໄດ້ 312 ລ້ານໂດລາສະຫະລັດ ຫຼື ທຽບເທົ່າ 2.543 ຕື້ກີບ, ທຽບໃສ່ຕົວເລກຄາດຄະເນ ໃນແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII ທີ່ໄດ້ກຳນົດສັດສ່ວນການລົງທຶນ ຈາກລະບົບການເງິນ-ເງິນຕາ ເຂົ້າໃສ່ຂົງເຂດເສດຖະກິດ ໃນໄລຍະ 2016-2020 ປະມານ 19%-21% ຂອງການລົງທຶນລວມ ຈຳນວນປະມານ 223 ພັນຕື້ກີບ ແມ່ນສາມາດບັນລຸໄດ້ 5,4% (ສະເພາະເບື້ອງຕະຫຼາດທຶນ).

ເພື່ອຮັບປະກັນຄຸນນະພາບຂອງບໍລິສັດທີ່ຈະອອກຈຳໜ່າຍຫຼັກຊັບ ແລະ ເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບ ຄຄຊ ໄດ້ເອົາໃຈໃສ່ຄົ້ນຄວ້າພິຈາລະນາ ແລະ ກັ່ນຕອງການສະເໜີຂອງບໍລິສັດ ຢ່າງເລິກເຊິ່ງ ລະອຽດຖີ່ຖ້ວນ ສຳລັບບໍລິສັດທີ່ຍັງບໍ່ທັນໄດ້ເງື່ອນໄຂ ກໍ່ໄດ້ແຈ້ງໃຫ້ສືບຕໍ່ກະກຽມ ເຮັດໃຫ້ໃນປີ 2016 ບໍ່ມີບໍລິສັດຈົດທະບຽນໃໝ່ໃນຕະຫຼາດຫຼັກຊັບລາວ. ແຕ່ເພື່ອເປັນການຊຸກຍູ້ສົ່ງເສີມໃຫ້ການເພີ່ມຜະລິດຕະພັນເຂົ້າປ້ອນຕະຫຼາດຫຼັກຊັບ ແລະ ຄັດຈ້ອນໄດ້ຫົວໜ່ວຍວິສາຫະກິດທີ່ມີເງື່ອນໄຂລະດົມທຶນໄລຍະຍາວຜ່ານຕະຫຼາດທຶນ, ຄຄຊ ໄດ້ແຕ່ງຕັ້ງຄະນະຮັບຜິດຊອບຄົ້ນຄວ້າບັນຊີລາຍຊື່ບໍລິສັດເປົ້າໝາຍເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ ຊຶ່ງຄະນະດັ່ງກ່າວ ແມ່ນປະກອບມີຫຼາຍພາກສ່ວນກ່ຽວຂ້ອງຂອງລັດເຂົ້າຮ່ວມ. ພ້ອມນັ້ນ ກໍ່ໄດ້ສ້າງກົນໄກອຳນວຍຄວາມສະດວກໃຫ້ແກ່ຊື້-ຂາຍຫຼັກຊັບໃນຕະຫຼາດຂັ້ນສອງ ໂດຍສະເພາະແມ່ນການພັດທະນາລະບົບໄອທີ ເພື່ອຮອງຮັບໃຫ້ແກ່ການຊື້-ຂາຍຜະລິດຕະພັນໃໝ່ ກໍຄື ຮຸ້ນກູ້ ແລະ ພັນທະບັດລັດຖະບານ.

**ຕາຕະລາງ 2: ສະຖິຕິກ່ຽວກັບການອອກຈຳໜ່າຍຫຼັກຊັບ ແຕ່ປີ 2010-2016**

ຫົວໜ່ວຍ: ລ້ານກີບ

| **ບໍລິສັດອອກຈຳໜ່າຍຫຼັກຊັບ** | | **2010** | **2012** | **2013** | **2014** | **2015** | **2016** | **ລວມ** |
|---|---|---|---|---|---|---|---|---|
| BCEL | | 305.390 | - | - | - | - | - | 305.390 |
| EDL-Gen | ພາຍໃນ | 931.998 | 1.611.151 | - | - | 2.754.000 | - | 5.297.149 |
| | ຕ່າງປະເທດ (ຮຸ້ນກູ້) | - | - | - | 1.625.000 * | - | 2.543.000* | 4.168.000 |
| LWPC | | - | - | 40.352 | - | - | - | 40.352 |
| PTL | | - | - | - | 240.000 | - | - | 240.000 |
| SVN | | | | | | 77.500 | - | 77.500 |
| **ລວມ** | | 1.237.389 | 1.611.151 | 40.352 | 1.865.000 | 2.831.500 | 2.543.000 | 10.128.391 |
| **ທຽບໃສ່ GDP ໃນປີ** | | 2,22% | 2,14% | 0,05% | 1,97% | 2,99% | 2,53%** | 10,09%** |

* ການອອກຈຳໜ່າຍຫຼັກຊັບໃນປີ 2014 ແລະ 2016 ຂອງບໍລິສັດ EDL-GEN ແມ່ນການອອກຈຳໜ່າຍຫຼັກຊັບ ປະເພດຮຸ້ນກູ້ ຢູ່ປະເທດ ໄທ. ສຳລັບຕົວເລກໃນການລະດົມທຶນອື່ນໆໃນຕາຕະລາງ ແມ່ນການລະດົມທຶນໂດຍການອອກຈຳໜ່າຍຫຼັກຊັບ ປະເພດຮຸ້ນ ຢູ່ພາຍໃນປະເທດ

** ທຽບໃສ່ GDP ຂອງປີ 2015.

## 3. ສະພາບການຊື້-ຂາຍໃນຕະຫຼາດຂັ້ນສອງ

ເພື່ອຊຸກຍູ້ໃຫ້ສະພາບການຊື້-ຂາຍຮຸ້ນ ໃນຕະຫຼາດຫຼັກຊັບ ມີຄວາມຄ່ອງຕົວ ແລະ ມີຊີວິດຊີວາຫຼາຍຂຶ້ນ, ຄຄຊ ໄດ້ພິຈາລະນາອະນຸຍາດໃຫ້ຕະຫຼາດຫຼັກຊັບລາວ ປັບປຸງຫົວໜ່ວຍການຊື້-ຂາຍຮຸ້ນຕ່ຳສຸດ ຈາກ 1 ຮຸ້ນ ມາເປັນ 100 ຮຸ້ນ ຫຼີກລ້ຽງການຊື້-ຂາຍທີ່ເປັນຮຸ້ນເສດ ບໍ່ເອື້ອອຳນວຍໃຫ້ແກ່ການຂະຫຍາຍປະລິມານການຊື້-ຂາຍ. ທາງດ້ານພື້ນຖານໂຄງລ່າງ ແມ່ນໄດ້ມີການສ້າງລະບົບການຊື້-ຂາຍພັນທະບັດລັດຖະບານແລະຮຸ້ນກູ້ ແລະ ເລີ່ມສຶກສາຄວາມເປັນໄປໄດ້ ໃນການສ້າງກະດານຊື້-ຂາຍຮຸ້ນມອນຊິນ ສຳລັບວິສາຫະກິດຂະໜາດນ້ອຍ-ກາງ. ທຽບໃສ່ປີ 2015 ເຫັນວ່າ ຕະຫຼາດທຶນມີການພັດທະນາທາງດ້ານພື້ນຖານໂຄງລ່າງ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ສຳລັບຜູ້ລົງທຶນເພີ່ມຂຶ້ນ ເຮັດໃຫ້ຈຳນວນບັນຊີຊື້-ຂາຍຫຼັກຊັບຂອງຜູ້ລົງທຶນ ເພີ່ມຂຶ້ນ 342 ບັນຊີ ລວມທັງໝົດມີ 12.418 ບັນຊີ. ຢ່າງໃດກໍ່ຕາມ, ໂດຍລວມຍັງເຫັນວ່າ ຕະຫຼາດຫຼັກຊັບ ຍັງບໍ່ທັນມີສະພາບຄ່ອງເທົ່າທີ່ຄວນ ເຖິງວ່າຈຳນວນບັນຊີຊື້-ຂາຍຫຼັກຊັບຂອງຜູ້ລົງທຶນພາຍໃນ ກວມເອົາ 79,78% ຂອງບັນຊີທັງໝົດ (9.907 ບັນຊີ) ແຕ່ຜູ້

ທີ່ມີສ່ວນຮ່ວມຫຼັກໃນການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ (ເກີນ 63% ຂອງມູນຄ່າການຊື້-ຂາຍທັງໝົດໃນປີ) ແມ່ນຜູ້ລົງທຶນຕ່າງປະເທດ. ເມື່ອໄດ້ຮັບຜົນກະທົບຈາກສະພາບເສດຖະກິດໂລກທີ່ມີຄວາມຜັນຜວນ ບໍ່ແນ່ນອນ ຈຶ່ງໄດ້ຫຼຸດການລົງທຶນໃນຕະຫຼາດນ້ອຍ ຜົນກຳໄລໜ້ອຍ ລົງ ພາໃຫ້ຕະຫຼາດທີ່ມີການຊື້-ຂາຍໂດຍຜູ້ລົງທຶນຕ່າງປະເທດເປັນສ່ວນໃຫຍ່ ຄື ສປປ ລາວ ໄດ້ຮັບຜົນກະທົບ ບວກກັບ ຜົນການດຳເນີນທຸລະກິດຂອງບາງບໍລິສັດຈົດທະບຽນ ແມ່ນບໍ່ໄດ້ຮັບຜົນດີເທົ່າທີ່ຄວນ ສະແດງອອກຈາກການຈ່າຍເງິນປັນຜົນຂອງບາງບໍລິສັດຫຼຸດລົງ ແລະ ບາງບໍລິສັດກໍ່ບໍ່ມີການຈ່າຍເງິນປັນຜົນ ເຮັດໃຫ້ລາຄາຮຸ້ນຫຼຸດລົງ ແລະ ສົ່ງຜົນໃຫ້ມູນຄ່າການຊື້-ຂາຍຮຸ້ນ, ມູນຄ່າຕະຫຼາດ ແລະ ປະລິມານການຊື້-ຂາຍຫຼຸດລົງ ເມື່ອທຽບໃສ່ປີ 2015.

ປີ 2016 ດັດຊະນີຕະຫຼາດຫຼັກຊັບລາວ ປິດຢູ່ທີ່ 1.014,05 ຈຸດ ຫຼຸດລົງ 180,25 ຈຸດ ຫຼື ເທົ່າກັບ -16,11% ທຽບໃສ່ດັດຊະນີທ້າຍປີຜ່ານມາ (ຕາຕະລາງ 3), ມີມູນຄ່າການຊື້-ຂາຍ 111,67 ຕື້ກີບ ຫຼຸດລົງ 44,22% ຈາກ 200,19 ຕື້ກີບ ແລະ ມີຈຳນວນຮຸ້ນຊື້-ຂາຍທັງໝົດ 22,12 ລ້ານຮຸ້ນ ຫຼຸດລົງ 29,22% ທຽບໃສ່ປີຜ່ານມາ.

**ແຜນວາດ 3: ຈຳນວນບັນຊີຊື້-ຂາຍຫຼັກຊັບຂອງຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ ປະຈຳປີ 2016**




**ແຜນວາດ 4: ເປີເຊັນມູນຄ່າການຊື້-ຂາຍຂອງຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ ປີ 2012-2016**



## ຕາຕະລາງ 3: ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ

| | ປີ 2015 | | | ປີ 2016 | | | % ການປ່ຽນແປງ | | |
|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າ ການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) |
| BCEL | 3.359.891 | 20.739.698.050 | 6.173 | 3.290.653 | 14.707.132.800 | 4.469 | -2,06 | -29,09 | -1,70 |
| EDL-GEN | 23.941.836 | 164.364.783.350 | 6.865 | 17.767.038 | 93.843.305.700 | 5.282 | -25,79 | -42,91 | -1,58 |
| LWPC | 42.200 | 335.722.600 | 7.956 | 9.906 | 56.928.800 | 5.747 | -76,53 | -83,04 | -2,21 |
| PTL | 3.606.229 | 13.749.026.900 | 3.813 | 732.433 | 1.992.384.650 | 2.720 | -79,69 | -85,51 | -1,09 |
| SVN | 309.600 | 1.009.380.000 | 3.260 | 325.156 | 1.078.090.400 | 3.316 | 5,02 | 6,81 | 3,32 |
| ລວມ | 31.259.756 | 200.198.610.900 | | 22.125.186 | 111.677.842.350 | | -29,22 | -44,22 | |

## ແຜນວາດ 5: ດັດຊະນີຕະຫຼາດຫຼັກຊັບລາວ ແຕ່ປີ 2011-2016




## ແຜນວາດ 6: ມູນຄ່າການຊື້-ຂາຍ ແລະ ປະລິມານການຊື້-ຂາຍ



### ແຜນວາດ 7: ມູນຄ່າຕະຫຼາດ ແຕ່ປີ 2011-2016




**ໝາຍເຫດ:** 9.91 ເປີເຊັນຕໍ່ GDP ແມ່ນທຽບໃສ່ຕົວເລກຄາດຄະເນຂອງ GDP ປະຈຳປີ 2016

## 4. ສະຖາບັນສື່ກາງດ້ານຫຼັກຊັບ

ສະຖາບັນສື່ກາງທາງດ້ານຫຼັກຊັບ ເປັນໜຶ່ງໃນຜູ້ມີສ່ວນຮ່ວມທີ່ສຳຄັນ ແລະ ຈຳເປັນໃນການຂັບເຄື່ອນຕະຫຼາດທຶນໃຫ້ມີການພັດທະນາ. ເນື່ອງຈາກ ວຽກງານຫຼັກຊັບ ຍັງເປັນວຽກໃໝ່ ຢູ່ ສປປ ລາວ, ນິຕິບຸກຄົນພາຍໃນຍັງບໍ່ທັນມີຄວາມເຂົ້າໃຈເລິກເຊິ່ງຕໍ່ການໃຫ້ບໍລິການເປັນສື່ກາງທາງດ້ານຫຼັກຊັບ ບວກກັບ ຕະຫຼາດທຶນລາວ ຍັງມີຂະໜາດນ້ອຍ ຈຶ່ງບໍ່ດຶງດູດສະຖາບັນສື່ກາງຕ່າງປະເທດເຂົ້າມາລົງທຶນໃຫ້ບໍລິການຢູ່ ສປປ ລາວ. ເຖິງຢ່າງໃດກໍ່ຕາມ ເພື່ອຊຸກຍູ້ໃຫ້ສະຖາບັນສື່ກາງຄົບຖ້ວນ ໃນປີ 2016, ຄຄຊ ໄດ້ຄົ້ນຄວ້າພິຈາລະນາຮັບຮອງເອົາບໍລິສັດປະເມີນມູນຄ່າຊັບສິນ (ບໍລິສັດ Sims Property Consultants Co.,Ltd ຈາກປະເທດໄທ) ແລະ ບໍລິສັດຈັດລຳດັບຄວາມໜ້າເຊື່ອຖືຈາກຕ່າງປະເທດ (ບໍລິສັດ TRIS Rating Co.,Ltd ຈາກປະເທດໄທ) ມາໃຫ້ບໍລິການທາງດ້ານວຽກງານຫຼັກຊັບ ຢູ່ ສປປ ລາວ ໂດຍບໍ່ຈຳເປັນຕ້ອງມີສຳນັກງານ ຕັ້ງຢູ່ ສປປ ລາວ ຊຶ່ງເຮັດໃຫ້ປະເພດການໃຫ້ບໍລິການເປັນສື່ກາງທາງດ້ານຫຼັກຊັບມີຄວາມຫຼາກຫຼາຍຂຶ້ນ.

ໃນປີ 2016 ຈຳນວນບໍລິສັດຫຼັກຊັບ ແລະ ບໍລິສັດກວດສອບທີ່ໃຫ້ບໍລິການທາງດ້ານຫຼັກຊັບ ແມ່ນຍັງມີຈຳນວນເທົ່າເດີມ, ແຕ່ນັກວິຊາຊີບທຸລະກິດຫຼັກຊັບທີ່ຖືກຮັບຮອງຈາກ ຄຄຊ ແມ່ນມີຈຳນວນເພີ່ມຂຶ້ນ ທຽບໃສ່ປີ 2015. ຮອດທ້າຍປີ 2016 ມີນາຍໜ້າຊື້-ຂາຍຫຼັກຊັບ ຈຳນວນ 20 ຄົນ, ຜູ້ຊ່ວຍນາຍໜ້າຊື້-ຂາຍຫຼັກຊັບ ຈຳນວນ 4 ຄົນ ແລະ ທີ່ປຶກສາທາງການເງິນຈຳນວນ 3 ຄົນ. ເຖິງຢ່າງໃດກໍ່ຕາມ, ຜ່ານການກວດກາສາມາດຕີລາຄາໄດ້ວ່າ ການດຳເນີນງານຂອງບາງບໍລິສັດຫຼັກຊັບ ຍັງບໍ່ທັນເຂັ້ມແຂງເທົ່າທີ່ຄວນ, ການແຂ່ງຂັນພາຍໃນລະຫວ່າງບໍລິສັດຫຼັກຊັບດ້ວຍກັນຍັງບໍ່ສູງ ເຮັດໃຫ້ຖານລູກຄ້າບໍ່ມີການຂະຫຍາຍຕົວເທົ່າທີ່ຄວນ.

## 5. ການໂຄສະນາເຜີຍແຜ່.

ວຽກງານໂຄສະນາເຜີຍແຜ່ ເປັນວຽກງານໜຶ່ງທີ່ສຳຄັນ ໃນການສ້າງຄວາມຮັບຮູ້ ແລະ ເຂົ້າໃຈໃຫ້ແກ່ຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ໂດຍສະເພາະແມ່ນຜູ້ລົງທຶນ. ໃນປີ 2016, ສຄຄຊ ໄດ້ຈັດຕັ້ງເຄື່ອນໄຫວວຽກງານໂຄສະນາເຜີຍແຜ່ຄວາມຮູ້ກ່ຽວກັບຕະຫຼາດທຶນ ໃຫ້ສັງຄົມ ດ້ວຍຫຼາຍຮູບການ ແລະ ຫຼາຍຊ່ອງທາງ ຜ່ານການຈັດຕັ້ງດ້ວຍຕົນເອງ ຫຼື ສົມທົບກັບບັນດາຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ກໍຄື ຕະຫຼາດຫຼັກຊັບ, ບໍລິສັດຫຼັກຊັບ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ. ໂດຍສະເພາະ ແມ່ນໄດ້ລົງເຜີຍແຜ່ກັບທີ່ ໄດ້ທັງໝົດ ຈຳນວນ 10 ຄັ້ງ ພ້ອມນີ້ ກໍ່ໄດ້

ໂຄສະນາຜ່ານສື່ມວນຊົນປະເພດຕ່າງໆ ເຊັ່ນ: ວາລະສານ, ໜັງສືພິມ, ເວັບໄຊ້ ແລະ ວິທະຍຸ. ອັນພົ້ນເດັ່ນ ແມ່ນໄດ້ສ້າງ ແລະ ເຜີຍແຜ່ລາຍການໂທລະພາບ “ເສັ້ນທາງສູ່ຕະຫຼາດທຶນລາວ” ອອກອາກາດໃຫ້ມວນຊົນທັງພາຍໃນ ແລະ ຕ່າງປະເທດໄດ້ຮັບຊົມຜ່ານທາງສະຖານີໂທລະພາບແຫ່ງຊາດລາວ ຊ່ອງ ທຊລ 1, ເຜີຍແຜ່ທຸກໆວັນອາທິດ ເວລາ 20:10-20:40 ໂມງ ແລະ ອອກອາກາດຄືນທຸກໆວັນພະຫັດ ເວລາ 9:00-9:30 ໂມງ. ຜ່ານການຈັດຕັ້ງປະຕິບັດດັ່ງກ່າວ ໄດ້ເຮັດໃຫ້ສັງຄົມມີຄວາມຮັບຮູ້ ແລະ ເຂົ້າໃຈ ຕໍ່ວຽກງານຕະຫຼາດທຶນຫຼາຍຂຶ້ນ ເຮັດໃຫ້ມີການປະກອບສ່ວນຈາກສັງຄົມໃນຕະຫຼາດທຶນເພີ່ມຂຶ້ນ ສະແດງອອກຄື ມີບັນຊີຊື້-ຂາຍຂອງຜູ້ລົງທຶນພາຍໃນເພີ່ມຂຶ້ນ ເມື່ອທຽບໃສ່ ປີ 2015.

**ຮູບພາບການເຜີຍແຜ່ວຽກງານຫຼັກຊັບໃຫ້ແກ່ຜູ້ມີສ່ວນຮ່ວມໃນວຽກງານຕະຫຼາດທຶນ**




**ການໂຄສະນາເຜີຍແຜ່ວຽກງານຫຼັກຊັບຜ່ານ ໂທລະພາບແຫ່ງຊາດລາວ ຊ່ອງ 1**
**ລາຍການ: “ເສັ້ນທາງສູ່ຕະຫຼາດທຶນລາວ”**



6. **ການພົວພັນຮ່ວມມືສາກົນ**

ເພື່ອພັດທະນາຕະຫຼາດທຶນລາວ ໃຫ້ມີການຂະຫຍາຍຕົວ ແລະ ເຄື່ອນໄຫວສອດຄ່ອງກັບຫຼັກການສາກົນ, ສຄຄຊ ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານພົວພັນຮ່ວມມືກັບສາກົນ ຕາມແນວທາງນະໂຍບາຍຂອງພັກ-ລັດວາງອອກ ໃນເງື່ອນໄຂການເຊື່ອມໂຍງເສດຖະກິດສາກົນ ດ້ວຍການຮ່ວມມືຫຼາຍຝ່າຍ ແລະ ສອງຝ່າຍໃນຫຼາຍລະດັບ ເພື່ອຍາດແຍ່ງການຊ່ວຍເຫຼືອທາງດ້ານເຕັກນິກວິຊາການ, ຖອດຖອນບົດຮຽນ, ກໍ່ສ້າງບຸກຄະລາກອນ ແລະ ແລກປ່ຽນຂໍ້ມູນຂ່າວສານ. ປີ 2016 ສຄຄຊ ໄດ້ເສີມຂະຫຍາຍການພົວພັນຮ່ວມມືກັບສາກົນ ແລະ ຍົກສູງຖານະບົດບາດຂອງ ສປປ ລາວ ໃນເວທີສາກົນ ດ້ວຍການເປັນເຈົ້າພາບຈັດກອງປະຊຸມ OECD Southeast Asia Corporate Governance Initiative ຄັ້ງທີ III ຢູ່ນະຄອນຫຼວງວຽງຈັນ ແລະ ເປັນປະທານຮ່ວມ ໃນກອງປະຊຸມຄະນະກຳມະການພັດທະນາຕະຫຼາດທຶນ (WC-CMD) ແຕ່ປີ 2016-2018. ສຄຄຊ ໄດ້ສືບຕໍ່ເຂົ້າຮ່ວມກອງປະຊຸມຕ່າງໆ ທີ່ຕິດພັນກັບວຽກງານຕະຫຼາດທຶນ ແລະ ການເຊື່ອມໂຍງຕະຫຼາດທຶນອາຊຽນ ຢ່າງເປັນປົກກະຕິ ເພື່ອເກັບກຳສະພາບ ແລະ ນຳມາຜັນຂະຫຍາຍໝູນໃຊ້ເຂົ້າໃນການປະຕິບັດວຽກງານໃຫ້ສອດຄ່ອງກັບຫຼັກ ການສາກົນ ແລະ ແທດເໝາະກັບສະພາບຕົວຈິງຂອງ ສປປ ລາວ. ພ້ອມນີ້, ເພື່ອສ້າງຄວາມເຂັ້ມແຂງ ແລະ ສ້າງເງື່ອນໄຂໃຫ້ ຄຄຊ ສປປ ລາວ ສາມາດເຊື່ອມໂຍງກັບພາກພື້ນກໍ່ຄືສາກົນໄດ້, ສຄຄຊ ກໍ່ໄດ້ເລີ່ມຄົ້ນຄວ້າກະກຽມການເຂົ້າເປັນສະມາຊິກຂອງອົງການຄຸ້ມຄອງຫຼັກຊັບສາກົນ ຫຼື IOSCO.

**ຮູບພາບກອງປະຊຸມ OECD-Southeast Asia Corporate Governance Initiative**
**ທີ່ ນະຄອນຫຼວງວຽງຈັນ**







## III. ທິດທາງແຜນການ ປີ 2017

ເພື່ອສືບຕໍ່ຈັດຕັ້ງປະຕິບັດວຽກງານຄຸ້ມຄອງຫຼັກຊັບ ໃຫ້ມີຄວາມຮັບປະກັນ ແລະ ສາມາດບັນລຸຕາມເປົ້າໝາຍ, ສຄຄຊ ຈະສຸມໃສ່ປະຕິບັດບັນດາໜ້າວຽກ ສຳລັບປີ 2017 ດັ່ງລາຍລະອຽດລຸ່ມນີ້:

1. **ດ້ານນິຕິກຳ**: ເອົາໃຈໃສ່ປັບປຸງກົດໝາຍວ່າດ້ວຍຫຼັກຊັບ ໃຫ້ມີລັກສະນະຄົບຖ້ວນ, ຮັດກຸມ ແລະ ສອດຄ່ອງກັບສະພາບການພັດທະນາຕະຫຼາດທຶນ ແລະ ມາດຖານສາກົນ; ຄົ້ນຄວ້າສ້າງ ແລະ ປັບປຸງນິຕິກຳຂອງ ຄຄຊ ໃຫ້ຄົບຖ້ວນສົມບູນ ແລະ ແທດເໝາະກັບສະພາບການຂະຫຍາຍຕົວຂອງວຽກງານຫຼັກຊັບໃນໄລຍະໃໝ່ ກໍ່ຄືເງື່ອນໄຂຂອງການເຊື່ອມໂຍງໃນພາກພື້ນ ແລະ ສາກົນ ເພື່ອກະຕຸກຊຸກຍູ້ໃຫ້ບໍລິສັດທີ່ມີເງື່ອນໄຂ ເຂົ້າມາຈົດທະບຽນໃນຕະຫຼາດຫຼັກຊັບລາວ ແລະ ຈູງໃຈໃຫ້ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ ເຂົ້າມາລົງທຶນໃນຕະຫຼາດຫຼັກຊັບລາວຫຼາຍຂຶ້ນ ເປັນຕົ້ນແມ່ນ ນິຕິກຳຕິດພັນກັບການກຳນົດລາຄາຮຸ້ນ, ການຮັບຮອງເອົາຕົວ

ແທນຜູ້ຖືຮຸ້ນກູ້, ການຄອບຄອງກິດຈະການ ແລະ ອື່ນໆ ພ້ອມທັງ ຕິດຕາມການສະເໜີ/ຮ້ອງຟ້ອງ/ຮ້ອງຮຽນ ຈາກສັງຄົມ ກ່ຽວກັບວຽກງານຫຼັກຊັບ.

2. **ການອອກຈຳໜ່າຍຫຼັກຊັບ ແລະ ການຄຸ້ມຄອງ:** ສຸມໃສ່ຄັດຈ້ອນ ແລະ ຈັດລຽງບູລິມະສິດລາຍຊື່ເປົ້າໝາຍ ບໍລິສັດເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ ລວມທັງບໍລິສັດລັດວິສາຫະກິດ ແລະ ບໍລິສັດເອກະຊົນ ໃຫ້ໄດ້ຕາມລະດັບຄາດໝາຍທີ່ວາງໄວ້, ຄົ້ນຄວ້າຄຳຮ້ອງຂໍອອກຈຳໜ່າຍຫຼັກຊັບ ຂອງບໍລິສັດທີ່ມີເງື່ອນໄຂລະດົມທຶນຜ່ານຕະຫຼາດທຶນ, ເອົາໃຈໃສ່ຕິດຕາມການເຄື່ອນໄຫວຂອງບັນດາບໍລິສັດຈົດທະບຽນ ໃນຕະຫຼາດຫຼັກຊັບລາວ ໃຫ້ເປັນປົກກະຕິ ເພື່ອຮັບປະກັນສິດ ແລະ ຜົນປະໂຫຍດຂອງຜູ້ລົງທຶນ. ພ້ອມນັ້ນ, ກໍ່ຊຸກຍູ້ໃຫ້ບໍລິສັດຈົດທະບຽນ ກະກຽມເງື່ອນໄຂຕ່າງໆທາງດ້ານບັນຊີຢ່າງຮອບດ້ານ ເພື່ອຮອງຮັບໃຫ້ແກ່ການນຳໃຊ້ຮູບແບບລາຍງານທາງການເງິນສາກົນ (IFRS) ແລະ ສົມທົບກັບ IFC ຄົ້ນຄວ້າສ້າງຫຼັກການຄຸ້ມຄອງບໍລິການກິດຈະການ (CG Code) ຂອງ ສປປ ລາວ.
3. **ການຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ:** ຊຸກຍູ້ຕະຫຼາດຫຼັກຊັບລາວ ເປັນເຈົ້າການໃນການຈັດຝຶກອົບຮົມ ເພື່ອສ້າງນັກວິຊາຊີບທຸລະກິດຫຼັກຊັບຂອງບໍລິສັດຫຼັກຊັບໃຫ້ຫຼາຍຂຶ້ນ, ຊຸກຍູ້ສະຖາບັນສື່ກາງດ້ານຫຼັກຊັບ ມີແບບແຜນການເຄື່ອນໄຫວທຸລະກິດທີ່ຈະແຈ້ງຊັດເຈນ ແລະ ມີຈຸດສຸມ ພ້ອມທັງນຳໃຊ້ຍຸດທະສາດແບບບຸກທະລຸ ເພື່ອເຂົ້າຫາບໍລິສັດເປົ້າໝາຍຈົດທະບຽນ. ພ້ອມນັ້ນ, ສຄຄຊ ກໍ່ຈະໄດ້ຕິດຕາມການເຄື່ອນໄຫວຂອງສະຖາບັນສື່ກາງດ້ານຫຼັກຊັບ ແລະ ຕິດຕາມການນຳໃຊ້ລະຫັດນັກວິຊາຊີບທຸລະກິດຫຼັກຊັບຢ່າງໃກ້ຊິດ ເປັນຕົ້ນ ລົງກວດກາກັບທີ່ ແລະ ກວດກາເອກະສານ ຄຽງຄູ່ກັບການຄົ້ນຄວ້າກ່ຽວກັບຫຼັກການຄຸ້ມຄອງຕາມຄວາມສ່ຽງຂອງບໍລິສັດຫຼັກຊັບ (Risk-Based Supervision) ເພື່ອເປັນເຄື່ອງທີ່ຮັດກຸມໃນການຄຸ້ມຄອງ ແລະ ການສ້າງຕັ້ງບໍລິສັດບໍລິຫານຊັບສິນ ເພື່ອເປັນການປູພື້ນຖານໃຫ້ແກ່ການສ້າງຜະລິດຕະພັນໃໝ່ ກໍຄື ກອງທຶນຮ່ວມ.
4. **ການຄຸ້ມຄອງການເຄື່ອນໄຫວໃນຕະຫຼາດຂັ້ນສອງ:** ເອົາໃຈໃສ່ສືບຕໍ່ຕິດຕາມການເຄື່ອນໄຫວຂອງໃນຕະຫຼາດຂັ້ນສອງ ດ້ວຍການຕິດຕາມການຊື້-ຂາຍທີ່ຜິດປົກກະຕິ ແລະ ການລົງກວດກາກັບທີ່, ປະຕິບັດແຜນການແກ້ໄຂສະພາບຄ່ອງຕະຫຼາດຫຼັກຊັບລາວ ໂດຍສະເພາະແມ່ນຂະຫຍາຍເວລາຊື້-ຂາຍຮຸ້ນ, ຊຸກຍູ້ການເພີ່ມອັດຕາສ່ວນການຖືຄອງຮຸ້ນຂອງຜູ້ຖືຮຸ້ນໃນບໍລິສັດຈົດທະບຽນ, ທົບທວນນະໂຍບາຍກ່ຽວກັບຄ່າທຳນຽມ, ເອົາໃຈໃສ່ການໂຄສະນາເຜີຍແຜ່ກ່ຽວກັບວຽກງານຕະຫຼາດທຶນ ໃຫ້ເຂົ້າເຖິງແຕ່ລະເປົ້າໝາຍ ແລະ ຄົ້ນຄວ້າຄຳສັ່ງຊື້-ຂາຍຮຸ້ນຈຳນວນຫຼາຍ (Block Trade) ເພື່ອອຳນວຍຄວາມສະດວກໃຫ້ແກ່ຜູ້ຖືຮຸ້ນລາຍໃຫຍ່. ພ້ອມນັ້ນ ຈະໄດ້ຄົ້ນຄວ້າຜະລິດພັນກອງທຶນຮ່ວມ ແລະ ຄົ້ນຄວ້າລະບົບຕິດຕາມການຊື້-ຂາຍຮຸ້ນ (Market Surveillance).
5. **ການໂຄສະນາເຜີຍແຜ່:** ຊຸກຍູ້ການຈັດຕັ້ງໂຄສະນາເຜີຍແຜ່ຄວາມຮູ້ ກ່ຽວກັບວຽກງານຕະຫຼາດທຶນ ໃຫ້ແກ່ສັງຄົມໄດ້ຮັບຮູ້ຢ່າງກວ້າງຂວາງ, ທົ່ວເຖິງ ແລະ ມີຄຸນນະພາບ ໂດຍຜ່ານຫຼາຍຊ່ອງທາງ ເປັນຕົ້ນແມ່ນ ໂທລະພາບ, ວິທະຍຸ, ໜັງສືພິມ, ວາລະສານ, ລົງເຜີຍແຜ່ກັບທີ່ ແລະ ຜ່ານສື່ມວນຊົນຕ່າງໆໃຫ້ຫຼາກຫຼາຍຂຶ້ນ ພ້ອມທັງ ຈັດສຳມະນາໃຫ້ແກ່ຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ຄຽງຄູ່ກັບການຄົ້ນຄວ້າການສ້າງຕັ້ງສູນໃຫ້ຄວາມຮູ້ ກ່ຽວກັບວຽກງານຕະຫຼາດທຶນ.
6. **ການພົວພັນຮ່ວມມືສາກົນ:** ສືບຕໍ່ຈັດຕັ້ງປະຕິບັດແຜນການຮ່ວມມືສອງຝ່າຍ ແລະ ຫຼາຍຝ່າຍ ເພື່ອຍາດແຍ່ງເອົາການຊ່ວຍເຫຼືອໃນການກໍ່ສ້າງບຸກຄະລາກອນ ໂດຍສົ່ງພະນັກງານໄປຝຶກວຽກຕົວຈິງຢູ່ອົງກອນຕ່າງໆ ແລະ ຈັດຝຶກອົບຮົມສຳມະນາຮ່ວມກັນ; ເປັນເຈົ້າພາບ ແລະ ປະທານຮ່ວມກັບກະຊວງການເງິນໄທ ໃນການຈັດກອງປະຊຸມຄະນະກຳມະການພັດທະນາຕະຫຼາດທຶນ (WC-CMD) ຢູ່ນະຄອນຫຼວງວຽງຈັນ ພ້ອມທັງ ສືບຕໍ່ຄົ້ນຄວ້າກະກຽມເງື່ອນໄຂຕ່າງໆ ເພື່ອເຂົ້າເປັນສະມາຊິກຂອງອົງການ IOSCO ແລະ ໂຄງການເຊື່ອມໂຍງອາຊຽນຕ່າງໆ.